**ສັນຍາການຄ້າ**

**ລະຫວ່າງ**

**ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ແລະ**

**ລັດຖະບານແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ຊຶ່ງຕໍ່ໄປນີ້ເອີ້ນວ່າ “ຄູ່ສັນຍາ”;

ດ້ວຍຄວາມປາຖະໜາທີ່ຈະເສີມຂະຫຍາຍ ແລະ ເປີດກວ້າງ ການຮ່ວມມືດ້ານເສດຖະກິດ - ການຄ້າ ລະຫວ່າງສອງປະເທດ ບົນຫຼັກການຄວາມສະເໝີພາບ, ຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະ ສາຍພົວພັນມິດຕະພາບ ແລະ ຄວາມສາມະຄີພິເສດຂອງ ສປປ ລາວ ແລະ ສສ ຫວຽດນາມ;

ໂດຍຢໍ້າຄືນເຖິງ ຄູ່ສັນຍາລ້ວນແລ້ວແຕ່ເປັນສະມາຊິກອົງການການຄ້າໂລກ ແລະ ຢືນຢັນວ່າ ສັນຍາສະບັບນີ້ຈະບໍ່ກະທົບຕໍ່ສິດ ແລະ ພັນທະຂອງ ແຕ່ລະຄູ່ສັນຍາ ໃນບັນດາສັນຍາ, ຂໍ້ຕົກລົງ ແລະ ນິຕິກຳອື່ນໆ ທີ່ກ່ຽວຂ້ອງ ຫລື ທີ່ໄດ້ລົງນາມໃນຂອບອົງການການຄ້າໂລກ;

ໂດຍອ້າງເຖິງບັນດາສັນຍາການຄ້າທີ່ສອງປະເທດໄດ້ລົງນາມ ເພື່ອສ້າງຂອບການຮ່ວມມືການຄ້າແບບຍຸດທະສາດການຄ້າ ເພື່ອເຮັດໃຫ້ການເຊື່ອມໂຍງເສດຖະກິດລະຫວ່າງຄູ່ສັນຍາ ເລິກເຊິ່ງ ແລະ ໜັກແໜ້ນຂຶ້ນກວ່າເກົ່າ;

ຄູ່ສັນຍາໄດ້ຕົກລົງກັນດັ່ງນີ້:

**ໝວດທີ 1.**

**ຈຸດປະສົງ ແລະ ຫຼັກການ**

**ມາດຕາ 1**

**ຈຸດປະສົງ**

ສັນຍາສະບັບນີ້ສ້າງຂຶ້ນເພື່ອເພີ່ມທະວີ ແລະ ຍົກສູງມິດຕະພາບ ແບບພິເສດ ແລະ ການຮ່ວມມືແບບຮອບດ້ານ, ສົ່ງເສີມການເຂົ້າເຖິງຕະຫຼາດດ້ານສິນຄ້າ, ດ້ານບໍລິການ ແລະ ພັດທະນາການເຊື່ອມຈອດ ລະຫວ່າງສອງປະເທດ ໃຫ້ມີຄວາມໝັ້ນຄົງ, ຍືນຍົງ ແລະ ຍາວນານ.

**ມາດຕາ 2**

**ຫຼັກການ**

1. ສັນຍາສະບັບນີ້ສ້າງຂອບວຽກດ້ານນິຕິກຳ ສຳຫລັບການພົວພັນການຄ້າລະຫວ່າງສອງປະເທດ ໂດຍສອດຄ່ອງກັບບັນດາກົດໝາຍ, ລະບຽບການ ແລະ ນະໂຍບາຍຂອງແຕ່ລະປະເທດບົນຫຼັກການສະເໝີພາບ, ຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະ ເສີມສ້າງມິດຕະພາບ ແລະ ຄວາມສາມະຄີແບບພິເສດຂອງສອງຊາດ ລາວ-ຫວຽດນາມ.

2. ສັນຍາສະບັບນີ້ແນ່ໃສ່ ສ້າງຄວາມສະດວກໃນລະດັບສູງສຸດໃຫ້ແກ່ການນຳເຂົ້າ ແລະ ສົ່ງອອກສິນຄ້າ ແລະ ການບໍລິການ ລະຫວ່າງສອງປະເທດ ແລະ ເປັນຂອບສັນຍາທີ່ກຳນົດທິດທາງ ໃຫ້ແກ່ການເຄື່ອນໄຫວການຄ້າ ແລະ ການບໍລິການ ທີ່ກ່ຽວຂ້ອງ.

3. ຢູ່ໃນສັນຍາສະບັບນີ້, ຄູ່ສັນຍາໄດ້ໃຫ້ຄຳໝັ້ນສັນຍາຈະໃຫ້ບູລິມາສິດພິເສດເຊິ່ງກັນແລະກັນ ຕໍ່ກັບການຄ້າດ້ານສິນຄ້າ ແລະ ການຄ້າດ້ານບໍລິການ.

## ໝວດທີ 2.
## ການເຂົ້າສູ່ຕະຫຼາດ
### ມາດຕາ 3
### ການຄ້າດ້ານສິນຄ້າ

1. ຄູ່ສັນຍາຈະຕ້ອງລຶບລ້າງອັດຕາພາສີຕໍ່ກັບທຸກໆສິນຄ້າທີ່ມີແຫຼ່ງກຳເນີດຈາກສອງປະເທດ ໂດຍໃຫ້ໄປຕາມເງື່ອນໄຂທີ່ໄດ້ລະບຸໄວ້ໃນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ Form S ພາຍໃຕ້ຂໍ້ຕົກລົງວ່າດ້ວຍແຫຼ່ງກຳເນີດສິນຄ້າ ລະຫວ່າງ ສປປ ລາວ ແລະ ຫວຽດນາມ ຍົກເວັ້ນບັນດາສິນຄ້າທີ່ນອນຢູ່ເອກະສານຊ້ອນທ້າຍກັບສັນຍາສະບັບນີ້. ບັນຊີເອກະສານຊ້ອນທ້າຍນີ້ຈະສືບຕໍ່ມີຜົນບັງຄັບໃຊ້ໂດຍອັດຕາໂນມັດຖ້າບໍ່ມີແຈ້ງການຈາກຝ່າຍໃດຝ່າຍໜຶ່ງ.

2. ລາຍການສິນຄ້າໃນບັນດາເອກະສານຊ້ອນທ້າຍ (1a, ບັນຊີ 2a , ບັນຊີ 1b, ບັນຊີ 2b ແລະ ບັນຊີ 3) ທີ່ໄດ້ແນບ ຕິດໃນສັນຍາສະບັບນີ້ແມ່ນກຳນົດເອົາຕາມລະບົບ AHTN 2012.

3. ຄູ່ສັນຍາຈະບໍ່ນຳໃຊ້ບັນດາມາດຕະການທີ່ບໍ່ແມ່ນພາສີ ທີ່ບໍ່ສອດຄ່ອງກັບລະບຽບການຂອງອົງການການຄ້າໂລກ ຕໍ່ກັບສິນຄ້ານຳເຂົ້າທີ່ມີແຫຼ່ງກຳເນີດຈາກສອງປະເທດຄູ່ສັນຍາ.

4. ແຕ່ລະຝ່າຍຈະປະຕິບັດຫຼັກການ ການປະຕິບັດແບບພາຍໃນຊາດ ຕໍ່ກັບສິນຄ້າຂອງສອງຝ່າຍ ໂດຍສອດຄ່ອງກັບມາດຕາ III ຂອງ GATT 1994.

5. ຄູ່ສັນຍາຈະບໍ່ນຳໃຊ້ ຫຼື ຮັກສາການອຸດໜູນການສົ່ງອອກ ທີ່ບໍ່ສອດຄ່ອງກັບລະບຽບການຂອງ ອົງການການຄ້າໂລກ.

### ມາດຕາ 4
### ການຄ້າດ້ານບໍລິການ

1. ເຫັນໄດ້ເຖິງຄວາມສຳຄັນຂອງການຄ້າດ້ານບໍລິການຕໍ່ກັບການຂະຫຍາຍຕົວ ແລະ ພັດທະນາເສດຖະກິດຂອງທັງສອງປະເທດ ແລະ ຮັບຮູ້ໄດ້ເຖິງລະດັບຄວາມ ແຕກຕ່າງກັນດ້ານການພັດທະນາເສດຖະກິດຂອງສອງປະເທດ, ແຕ່ລະຝ່າຍຈະຫຼຸດຜ່ອນ ຫຼື ລຶບລ້າງບັນດາມາດຕະການທີ່ເປັນອຸປະສັກຕໍ່ການບໍລິການ ແລະ ຜູ້ສະໜອງການບໍລິການ ຂອງຄູ່ສັນຍາ ໂດຍສອດຄ່ອງກັບຄວາມຕ້ອງການຂອງການຄ້າ ແລະ ການເງິນ.

2. ຕໍ່ກັບຂໍ້ສະເໜີຂອງສອງຝ່າຍ, ຄູ່ສັນຍາຈະພິຈາລະນາ ໂດຍຜ່ານການປຶກສາຫາລື, ເພື່ອກ້າວໄປເຖິງການເປີດເສລີທາງການຄ້າດ້ານບໍລິການ ລະຫວ່າງສອງປະເທດ.

## ໝວດທີ 3:
## ການອຳນວຍຄວາມສະດວກດ້ານການຄ້າ
### ມາດຕາ 5
### ລະບຽບການດ້ານພາສີ.

1. ຄູ່ສັນຍາຈະຕ້ອງຮັບປະກັນຄວາມໝັ້ນຄົງຂອງຂັ້ນຕອນດ້ານພາສີ, ສາມາດຄາດການ, ໂປ່ງໃສ ແລະ ສ້າງເງື່ອນໄຂສະດວກໃຫ້ແກ່ການຄ້າໂດຍຜ່ານການ ເພີ່ມທະວີຄວາມວອ່ງໄວ ຂອງຂະບວນການແຈ້ງເສຍພາສີສຳລັບສິນຄ້ານຳເຂົ້າ ແລະ ສົ່ງອອກ ຂອງແຕ່ລະປະເທດ.

2. ເຈົ້າໜ້າທີ່ພາສີຂອງສອງຝ່າຍຈະດຳເນີນການທົບທວນລະບຽບການພາສີຂອງຕົນເປັນແຕ່ລະໄລຍະ ເພື່ອແນໃສ່ເຮັດໃຫ້ຂັ້ນຕອນທາງພາສີງ່າຍດາຍ ເພື່ອສົ່ງເສີມການຄ້າລະຫວ່າງສອງປະເທດ.

3. ການຄຸ້ມຄອງຄວາມສ່ຽງ: ການກວດກາຢ່າງວ່ອງໄວຈະປະຕິບັດຕໍ່ກັບສິນຄ້າທີ່ມີຄວາມສ່ຽງຕໍ່າ ແລະ ການກວດກາທາງດ້ານຮູບປະພັນຂອງສິ່ງຂອງແມ່ນຈະປະຕິບັດຕໍ່ກັບສິນຄ້າທີ່ມີຄວາມສ່ຽງສູງ.

4. ຄູ່ສັນຍາເຫັນດີເປັນເອກະພາບ ເພື່ອເພີ່ມທະວີການນຳໃຊ້ເຕັກໂນໂລຢີເຂົ້າໃນການກວດກາຂັ້ນຕອນທາງພາສີ ແລະ ການກວດສອບພາຍຫຼັງການແຈ້ງເສຍພາສີ ແລະ ເພື່ອປະສານໃນການເກັບກຳຕົວເລກສະຖິຕິ.

5. ສອງຝ່າຍເຫັນດີເປັນເອກະພາບ ໃນການທົດລອງນຳໃຊ້ລະບົບ "ຈຸດກວດກາດຽວ" ຮູບແບບການກວດສອດການເຂົ້າອອກສິນຄ້າ ທີ່ ດ່ານສາກົນລາວບາວ-ແດນສະຫວັນ ແລະ ພິຈາລະນາ ທົດລອງນຳໃຊ້ກັບດ່ານສາກົນອື່ນໆທີ່ມີເງື່ອນໄຂ.

## ມາດຕາ 6.
## ການຊຳລະ ແລະ ໂອນເງິນ

1. ທຸກການຊຳລະທີ່ຕິດພັນກັບການຄ້າດ້ານສິນຄ້າ ແລະ ການຄ້າດ້ານບໍລິການຂອງສອງປະເທດ ແມ່ນປະຕິບັດຕາມສະກຸນເງິນຂອງແຕ່ລະປະເທດ ຫຼື ເງິນຕາຕ່າງປະເທດທີ່ສາມາດແລກປ່ຽນໄດ້ງ່າຍ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດຂອງແຕ່ລະຝ່າຍ ແລະ ສັນຍາການຊຳລະລະຫວ່າງສອງປະເທດ.

2. ທຸກການຊຳລະ ຫລື ທຸລະກຳ ຕ້ອງສອດຄ່ອງກັບບັນດາກົດໝາຍ ແລະ ລະບຽບການຂອງແຕ່ລະປະເທດ.

3. ສອງຝ່າຍເຫັນດີເປັນເອກະພາບໃນການສ້າງເງື່ອນໄຂສະດວກ ໃຫ້ແກ່ທະນາຄານຮ່ວມທຸລະກິດຂອງສອງປະເທດ ເພື່ອເປັນການປະກອບສ່ວນຢ່າງຕັ້ງໜ້າໃຫ້ແກ່ການດຳເນີນທຸລະກິດຂອງສອງປະເທດ.

## ໝວດທີ 4.
## ການຄ້າຊາຍແດນ
## ມາດຕາ 7.
## ສັນຍາການຄ້າຊາຍແດນ

1. ເພື່ອເພີ່ມທະວີການແລກປ່ຽນຊື້ຂາຍລະຫວ່າງສອງປະເທດໃນຂອບເຂດຊາຍແດນ ແລະ ຍົກສູງຊີວິດການເປັນຢູ່ຂອງປະຊາຊົນໃນເຂດຊາຍແດນຂອງສອງປະເທດ ແລະ ເພື່ອປະກອບສ່ວນຢ່າງຕັ້ງໜ້າໃຫ້ແກ່ການຄ້າສອງຝ່າຍ, ຄູ່ສັນຍາຈະປຶກສາຫາລື, ຕົກລົງ ແລະ ລົງນາມສັນຍາດັ່ງກ່າວພາຍໃນປີ 2015 ແນ່ໃສ່ເພື່ອສ້າງເງື່ອນໄຂສະດວກທີ່ສຸດໃຫ້ແກ່ການຄ້າຊາຍແດນ ແລະ ການແລກປ່ຽນສິນຄ້າຂອງປະຊາຊົນໃນເຂດຊາຍແດນ.

2. ການໃຫ້ອັດຕາພາສີນຳເຂົ້າແບບພິເສດສຳລັບສິນຄ້ານ້ຳຕານ ແລະ ສິນຄ້າອື່ນໆ ທີ່ສະເໜີໂດຍຝ່າຍລາວ ຫວຽດນາມຈະໄດ້ພິຈາລະນາ ແລະ ນຳເຂົ້າໄປຈັດຕັ້ງປະຕິບັດຢູ່ໃນສັນຍາການຄ້າຊາຍແດນ.

## ມາດຕາ 8.
## ການຮ່ວມມືຕ້ານການຄ້າຂາຍເຖື່ອນ

ຄູ່ສັນຍາຈະຕ້ອງປະສານໃນການແລກປ່ຽນຂໍ້ມູນຂ່າວສານ, ສ້າງແຜນປະຕິບັດງານຮ່ວມກັນ ແລະ ຮ່ວມມືກັນຕ້ານການຄ້າຂາຍເຖື່ອນ, ໂດຍສະເພາະແມ່ນຢູ່ຕາມບັນດາແຂວງຊາຍແດນຂອງສອງປະເທດ.

## ໝວດທີ 5.
## ການສົ່ງເສີມການຄ້າ
## ມາດຕາ 9
## ການຮ່ວມມືໃນຂົງເຂດການສົ່ງເສີມການຄ້າ.

1. ຄູ່ສັນຍາຈະເພີ່ມທະວີການຮ່ວມມືໃນຂົງເຂດວຽກງານການສົ່ງເສີມການຄ້າເຊັ່ນ: ງານວາງສະແດງສິນຄ້າ, ການຈັດສຳມະນາ, ພົບປະທຸລະກິດ ແລະ ແລກປ່ຽນປະສົບການໃນຂົງເຂດວຽກງານສົ່ງເສີມການຄ້າ.

2. ຄູ່ສັນຍາຈະແລກປ່ຽນຂໍ້ມູນຂ່າວສານເສດຖະກິດ-ການຄ້າເຊິ່ງກັນແລະກັນ, ປຶກສາຫາລືບັນດາມາດຕະການ ແລະ ນະໂຍບາຍເພື່ອເພີ່ມທະວີການຄ້າ ໂດຍໃຫ້ສອດຄ່ອງກັບລະບຽບກົດໝາຍ, ຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະ ລະບຽບການຂອງສາກົນ.

## ມາດຕາ 10
## ການນໍາໃຊ້ການຄ້າ ທາງເອເລັກໂຕນິກ

ສອງຝ່າຍຈະເພີ່ມທະວີການເຜີຍແຜ່ ແລະ ແນະນໍາວິທີການນໍາໃຊ້, ພັດທະນາການຄ້າທາງເອເລັກໂຕນິກ ແລະ ປົກປ້ອງຜູ້ຊົມໃຊ້ທີ່ນໍາໃຊ້ ການຄ້າເອເລັກໂຕນິກ.

## ໝວດທີ 6.
## ການຈັດຕັ້ງປະຕິບັດສັນຍາ
## ມາດຕາ 11
## ສະໜັບສະໜູນການເຊື່ອມໂຍງ.

ສອງຝ່າຍຈະແລກປ່ຽນຂໍ້ມູນຂ່າວສານ, ຄວາມຮູ້ປະສົບການ, ສະໜັບສະໜູນຈຸດຢືນ ແລະ ມຸມມອງ ຢູ່ໃນເວທີສາກົນ, ພາກພື້ນ ແລະ ເວທີເສດຖະກິດອື່ນໆ.

## ມາດຕາ 12
## ຂໍ້ຍົກເວັ້ນລວມ

ບໍ່ມີຂໍ້ກໍານົດໃດໃນສັນຍາສະບັບນີ້ທີ່ສາມາດສະກັດກັ້ນແຕ່ລະຝ່າຍໃນການຈັດຕັ້ງປະຕິບັດມາດຕາເພື່ອປ້ອງກັນຊາດ ຫຼື ປົກປັກມໍລະດົກວັດຖຸມີຄ່າທາງປະຫວັດສາດ, ວັດທະນາທໍາ, ປ້ອງກັນສຸຂະພາບຂອງຄົນ, ສັດ ແລະ ພືດ ໃນດິນແດນ ແລະ ໃນນໍ້າ ໂດຍສອດຄ່ອງກັບບັນດາລະບຽບການຂອງອົງການການຄ້າໂລກ ແລະ ຮັບປະກັນການປົກປ້ອງສິ່ງແວດລ້ອມ.

## ມາດຕາ 13
## ໜ່ວຍງານຈັດຕັ້ງປະຕິບັດ

ຄູ່ສັນຍາຈະແຕ່ງຕັ້ງໃຫ້ກະຊວງອຸດສາຫະກໍາ ແລະ ການຄ້າ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ ແລະ ກະຊວງອຸດສາຫະກໍາ ແລະ ການຄ້າ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ເປັນຈຸດປະສານງານກັບບັນດາກະຊວງທີ່ກ່ຽວຂ້ອງຂອງຕົນໃນການຈັດຕັ້ງປະຕິບັດສັນຍາສະບັບນີ້.

## ມາດຕາ 14
## ການແກ້ໄຂຂໍ້ຂັດແຍ່ງ

ທຸກຄວາມເຂົ້າໃຈທີ່ແຕກຕ່າງໃນການອະທິບາຍ ຫຼື ປະຕິບັດບັນດາຂໍ້ກໍານົດໃນສັນຍາສະບັບນີ້ ແມ່ນຈະແກ້ໄຂໂດຍການປຶກສາຫາລື ໂດຍຄູ່ສັນຍາ ບົນຈິດໃຈຄວາມສ້າງສັນ ແລະ ຄວາມສາມັກຄີ.

## ມາດຕາ 15
## ເອກະສານຊ້ອນທ້າຍ

ເອກະສານຊ້ອນທ້າຍ ທີ່ຄັດຕິດມາກັບສັນຍາສະບັບນີ້ ແມ່ນຈະເປັນສ່ວນໜຶ່ງຂອງສັນຍາສະບັບນີ້.

## ມາດຕາ 16
## ການມີຜົນບັງຄັບໃຊ້ຂອງສັນຍາ

1. ສັນຍາສະບັບນີ້ຈະມີຜົນບັງຄັບໃຊ້ພາຍໃນໄລຍະເວລາ 60 ວັນ, ພາຍຫຼັງໄດ້ຮັບໜັງສືແຈ້ງຜ່ານຊ່ອງທາງການທູດເມື່ອສໍາເລັດຂັ້ນຕອນຂໍອະນຸມັດພາຍໃນຂອງຕົນຕໍ່ກັບຜົນບັງຄັບໃຊ້ຂອງສັນຍາສະບັບນີ້.

2. ສັນຍາສະບັບນີ້ປ່ຽນແທນ ສັນຍາການຄ້າ ລະຫວ່າງ ລັດຖະບານ ສປປ ລາວ ແລະ ລັດຖະບານ ສສ ຫວຽດນາມ ທີ່ລົງນາມຮ່ວມກັນໃນວັນທີ 09 ມີນາ 1998 ຢູ່ນະຄອນຫຼວງວຽງຈັນ ແລະ ຂໍ້ຕົກລົງວ່າດ້ວຍການໃຫ້ບູລິມະສິດດ້ານອັດຕາພາສີຂາເຂົ້າ ລະຫວ່າງ ລັດຖະບານ ສປປ ລາວ ແລະ ລັດຖະບານ ສສ ຫວຽດນາມ ທີ່ລົງນາມຮ່ວມກັນໃນວັນທີ 01 ທັນວາ 2011 ຢູ່ນະຄອນຫຼວງວຽງຈັນ.

3. ສັນຍາສະບັບນີ້ມີຜົນບັງຄັບໃຊ້ ໃນໄລຍະເວລາ 05 ປີ ນັບຕັ້ງແຕ່ມື້ມີຜົນບັງຄັບໃຊ້ ແລະ ຈະຕໍ່ອາຍຸໂດຍອັດຕະໂນມັດອອກໄປທຸກໆ 03 ປີ. ສັນຍາສະບັບນີ້ຈະໝົດຜົນບັງຄັບໃຊ້ພາຍໃນ 03 ເດືອນ ພາຍຫຼັງຝ່າຍໃດຝ່າຍໜຶ່ງ ແຈ້ງໃຫ້ອີກຝ່າຍໜຶ່ງຜ່ານຊ່ອງທາງການທູດ ກ່ຽວກັບການສິ້ນສຸດຜົນບັບຄັບໃຊ້ສັນຍາສະບັບນີ້.

4. ເມື່ອສັນຍາສະບັບນີ້ໝົດຜົນບັງຄັບໃຊ້, ບັນດາຂໍ້ກຳນົດຂອງສັນຍາສະບັບນີ້ຈະຍັງສືບຕໍ່ມີຜົນບັງຄັບໃຊ້ ສຳລັບສັນຍາຊື້-ຂາຍທີ່ໄດ້ເຊັນກັນກ່ອນທີ່ສັນຍາຈະໝົດຜົນບັງຄັບໃຊ້.

5. ສັນຍາສະນີ້ສາມາດປັບປຸງຫຼືເພີ່ມເຕີມ ດ້ວຍການແຈ້ງເປັນລາຍລັກອັກສອນຂອງຄູ່ສັນຍາ. ການປັບປຸງ ແລະ ການເພີ່ມເຕີມຖືວ່າເປັນພາກສ່ວນໜຶ່ງຂອງສັນຍາ ແລະ ມີຜົນບັງຄັບໃຊ້ ໂດຍສອດຄ່ອງກັບຂໍ້ທີ່ 1 ຂອງມາດຕານີ້.

ເຮັດທີ່ ນະຄອນຫຼວງວຽງຈັນ ໃນວັນທີ 03 ມີນາ 2015 ເປັນ 3 ສະບັບຕົ້ນ, ພາສາລາວ, ຫວຽດ ແລະ ອັງກິດ, ແຕ່ລະສະບັບແມ່ນມີຄຸນຄ່າເທົ່າກັນ. ໃນກໍລະນີມີຄວາມແຕກຕ່າງໃນພາກຕີຄວາມໝາຍ ຫລື ຈັດຕັ້ງປະຕິບັດສັນຍາສະບັບນີ້ ສະບັບພາສາອັງກິດຈະໃຊ້ເປັນບ່ອນອີງ.

| ຕາງໜ້າ ລັດຖະບານ ແຫ່ງ<br>ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ | ຕາງໜ້າ ລັດຖະບານ ແຫ່ງ<br>ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ |
|---|---|
| ເຂັມມະນີ ພົນເສນາ<br>ລັດຖະມົນຕີວ່າການ<br>ກະຊວງອຸດສາຫະກຳ ແລະ ການຄ້າ | ຫວູ ຮຸຍຮວ່າງ<br>ລັດຖະມົນຕີວ່າການ<br>ກະຊວງອຸດສາຫະກຳ ແລະ ການຄ້າ |

## ເອກະສານຊ້ອນທ້າຍ 1a

ລາຍການສິນຄ້າທີ່ມີແຫລ່ງກຳເນີດຈາກ ສສ ຫວຽດນາມ, ທີ່ໄດ້ຮັບການຫລຸດຜ່ອນ 50% ຈາກອັດຕາພາສີຂາເຂົ້າ ຂອງ ສປປ ລາວ ທີ່ໃຫ້ພາຍໃຕ້ສັນຍາອາຕີກາ, ມີດັ່ງນີ້:

| ລ/ດ | AHTN 2012 | ເນື້ອໃນລະອຽດ |
|---|---|---|
| | 0106 | **ສັດທີ່ມີຊີວິດອື່ນໆ** |
| | | - ສັດເລືອດ ອຸ່ນທີ່ລ້ຽງລູກດ້ວຍນົມ: |
| 01 | 0106.19.00 | - - ອື່ນໆ |
| 02 | 0106.20.00 | - ສັດເລືອຄານ (ລວມທັງຈຳພວກງູ ແລະ ເຕົ່າ) |
| | | - ນົກ: |
| 03 | 0106.31.00 | - - ນົກໃຊ້ເປັນອາຫານ |
| 04 | 0106.32.00 | - - ນົກລ້ຽງເພື່ອຄວາມສວຍງາມ (ລວມທັງນົກແກ້ວ, ນົກແກ້ວຫາງຍາວ, ນົກຍູງ ແລະ ນົກແກ້ວຂາວ) |
| 05 | 0106.33.00 | - - ນົກກະຈອກເທດ; ນົກອີມູສ໌ *(ຊະນິດໂດຣເມອັສ ໂນ ເວໂຮນແລນໄດເອ)* |
| 06 | 0106.39.00 | - - ອື່ນໆ |
| | | - ແມງໄມ້: |
| 07 | 0106.41.00 | - - ເຜີ້ງ |
| 08 | 0106.49.00 | - - ອື່ນໆ |
| 09 | 0106.90.00 | - ອື່ນໆ |
| | 0203 | ຊີ້ນໝູ, ສົດ, ແຊ່ເຢັນ ຫຼື ແຊ່ແຂງ. |
| | | - ສົດ ຫຼື ແຊ່ເຢັນ: |
| 10 | 0203.11.00 | - - ທັງໂຕ ແລະ ເຄິ່ງໂຕ |
| 11 | 0203.12.00 | - - ຂາຫຼັງ, ຂາໜ້າ ແລະ ສ່ວນຕັດຂອງຂາດັ່ງກ່າວທີ່ມີກະດູກຕິດ |
| 12 | 0203.19.00 | - - ອື່ນໆ |
| | | - ແຊ່ແຂງ: |
| 13 | 0203.21.00 | - - ທັງໂຕ ແລະ ເຄິ່ງໂຕ |
| 14 | 0203.22.00 | - - ຂາຫຼັງ, ຂາໜ້າ ແລະ ສ່ວນຕັດຂອງຂາດັ່ງກ່າວທີ່ມີກະດູກຕິດ |
| 15 | 0203.29.00 | - - ອື່ນໆ |
| | 02.01 | ຊີ້ນ ແລະ ສ່ວນອື່ນຂອງສັດທີ່ບໍລິໂພກໄດ້, ເອືອບເກືອ, ແຊ່ນ້ຳເກືອ, ແຫ້ງ ຫຼື ອົບຄວັນ; ຊີ້ນ ແລະ ສ່ວນອື່ນຂອງສັດທີ່ບົດເປັນແປ້ງ ຊຶ່ງສາມາດບໍລິໂພກໄດ້. |
| | | - ຊີ້ນໝູ: |
| 16 | 0210.11.00 | - - ຂາຫຼັງ, ຂາໜ້າ ແລະ ສິ້ນສ່ວນຂອງຂາດັ່ງກ່າວ ຊຶ່ງຕັດອອກທີ່ມີກະດູກຕິດ |
| 17 | 0210.12.00 | - - ຊີ້ນສ່ວນທ້ອງ ແລະ ສິ້ນສ່ວນຂອງຊີ້ນດັ່ງກ່າວ ຊຶ່ງຕັດອອກ |
| | 0210.19 | - - ອື່ນໆ: |
| 18 | 0210.19.30 | - - - ຊີ້ນຫມູສາມຊັ້ນອົບແຫ້ງ (ເບຄອນ) |
| 19 | 0210.19.90 | - - - ອື່ນໆ |

| | | |
|---|---|---|
| 20 | 0210.20.00 | - ຊີ້ນສັດຈຳພວກງົວຄວາຍ |
| | | - ອື່ນໆ, ລວມທັງແປ້ງ ແລະ ອາຫານທີ່ເຮັດດ້ວຍຊີ້ນ ແລະ ສ່ວນອື່ນຂອງສັດທີ່ບໍລິໂພກໄດ້: |
| 21 | 0210.91.00 | - - ທີ່ໄດ້ຈາກສັດລ້ຽງລູກດ້ວຍນົມຈຳພວກລີງ |
| | 0210.92 | - - ຈຳພວກປາວານ, ປາໂລມາ ແລະ ປາໃນຕະກຸນໂລມາ (ສັດລ້ຽງລູກດ້ວຍນົມຈຳພວກເຊຕາເຊຍ); ເມເທີ ແລະ ປາພະຍູນ (ສັດລ້ຽງລູກດ້ວຍນົມຈຳພວກໄຊຣີເນຍ); ແມວນ້ຳ, ສິງໂຕທະເລ ແລະ ຊ້າງນ້ຳ (ສັດລ້ຽງລູກດ້ວຍນົມນົມໃນອັນດັບ ຍ່ອຍພິນພິເດຍ): |
| 22 | 0210.92.10 | - - - ຈຳພວກປາວານ, ປາໂລມາ ແລະ ປາໃນຕະກຸນໂລມາ (ສັດລ້ຽງລູກດ້ວຍນົມຈຳ ພວກເຊຕາເຊຍ); ເມເທີ ແລະ ປາພະຍູນ (ສັດລ້ຽງລູກດ້ວຍນົມ ຈຳພວກໄຊຣີເນຍ) |
| 23 | 0210.92.90 | - - - ອື່ນໆ |
| 24 | 0210.93.00 | - - ທີ່ໄດ້ຈາກສັດເລືອຄານ (ລວມທັງຈຳພວກງູ ແລະ ເຕົ່າ) |
| | 0210.99 | - - ອື່ນໆ: |
| 25 | 0210.99.10 | - - - ໄກ່ຕາກແຫ້ງແຊ່ເຢັນ |
| 26 | 0210.99.20 | - - - ໜັງໝູຕາກແຫ້ງ |
| 27 | 0210.99.90 | - - - ອື່ນໆ |

**ໝາຍເຫດ**:

1. ບັນດາລາຍການສິນຄ້າທີ່ລະບຸດັ່ງກ່າວຂ້າງເທິງ ແມ່ນອີງຕາມ ສາລະບານອັດຕາພາສີເອກະພາບອາຊຽນ ປີ 2012 (AHTN 2012) ຂອງ ສປປ ລາວ.
2. ໃບຢັ້ງຢືນແຫລ່ງກຳເນີດສິນຄ້າ ທີ່ໃຊ້ສຳລັບຢັ້ງຢືນຕໍ່ບັນຊີລາຍການສິນຄ້າທີ່ລະບຸດັ່ງກ່າວຂ້າງເທິງ ແມ່ນນຳໃຊ້ໃບຢັ້ງຢືນແຫລ່ງກຳເນີດສິນຄ້າຟອມ S

**ເອກະສານຊ້ອນທ້າຍ** 2a

ລາຍການສິນຄ້າທີ່ມີແຫລ່ງກຳເນີດຈາກ ສສ ຫວຽດນາມ, ທີ່ບໍ່ໄດ້ຮັບການຫລຸດອັດຕາພາສີຂາເຂົ້າ ຈາກ ສປປ ລາວ ມີດັ່ງນີ້:

| ລ/ດ | AHTN 2012 | ເນື້ອໃນລະອຽດ |
|---|---|---|
| | 0507 | **ງາ, ອອງເຕົ່າ, ກະດູກປາວານ, ຂົນຂໍ້ຕີນ້າ, ໜວດຄາງຂອງປາວານ, ເຂົາ, ເຂົາ ກວາງ, ກີບຕີນສັດ, ເລັບຕີນສັດ, ເລັບແຫຼມສັດ ແລະ ສົບນົກທີ່ຍັງບໍ່ທັນຕົບແຕ່ງ ຫຼື ພຽງ ແຕ່ຕົບແຕ່ງໃນເບື້ອງຕົ້ນ, ແຕ່ບໍ່ໄດ້ຕັດເປັນຮູບຊົງ; ຜົງ ແລະ ເສດຂອງຜະລິດຕະພັນເຫຼົ່ານີ້.** |
| | 0507.10 | - ງາ; ຜົງ ແລະ ເສດຂອງງາ: |
| 01 | 0507.10.10 | - - ນໍແຮດ, ງາເປັນຝຸ່ນ ແລະ ເສດຂອງງາ |
| 02 | 0507.10.90 | - - ອື່ນໆ |
| | 0507.90 | - ອື່ນໆ: |
| 03 | 0507.90.10 | - - ເຂົາ, ເຂົາກວາງ, ກີບຕີນສັດ, ເລັບຕີນສັດ, ເລັບແຫຼມສັດ ແລະ ສົບນົກ |
| 04 | 0507.90.20 | - - ອອງເຕົ່າ |
| 05 | 0507.90.90 | - - ອື່ນໆ |
| | 1207 | **ແກ່ນພືດ ແລະ ແກ່ນໝາກໄມ້ອື່ນໆ ທີ່ມີນໍ້າມັນ, ຈະບົດແຕກແລ້ວ ຫຼື ບໍ່ກໍ່ຕາມ.** |
| | | - ອື່ນໆ: |
| 06 | 1207.91.00 | - - ແກ່ນຝິ່ນ |
| | 1211 | ຕົ້ນໄມ້ ແລະ ພາກສ່ວນຂອງຕົ້ນໄມ້ (ລວມທັງເມັດ ແລະ ໝາກໄມ້), ຊະນິດທີ່ໃຊ້ ຕົ້ນຕໍໃນການເຮັດເຄື່ອງນໍ້າຫອມ, ໃນທາງການຢາ ຫຼື ໃຊ້ໃນການຂ້າແມງໄມ້, ຢາຂ້າເຊື້ອຣາ ຫຼື ຈຸດປະສົງທີ່ຄ້າຍຄືກັນ, ສົດ ຫຼື ແຫ້ງ, ຈະຕັດ, ບົດ ຫຼື ເຮັດເປັນຜົງລະອຽດແລ້ວ ຫຼື ບໍ່ກໍ່ຕາມ. |
| | 1211.30 | - ໃບໂກໂກ້: |
| 07 | 1211.30.10 | - - ຕັດ, ບົດ ຫຼື ເປັນຜົງ |
| 08 | 1211.30.90 | - - ອື່ນໆ |
| 09 | 1211.40.00 | - ດອກຝິ່ນແຫ້ງ |
| | 1211.90 | - ອື່ນໆ: |
| | | - - ຊະນິດໃຊ້ໃນການຜະລິດຢາປົວພະຍາດຂັ້ນຕົ້ນ: |
| 10 | 1211.90.11 | - - - ກັນຊາ, ຕັດ, ບົດ ຫຼື ເປັນຜົງ |
| 11 | 1211.90.12 | - - - ກັນຊາ, ໃນຮູບແບບອື່ນ |
| 12 | 1211.90.14 | - - - ອື່ນໆ, ຕັດ, ບົດ ຫຼື ເປັນຜົງ |
| | 1301 | ຂີ້ຄັ່ງກັ່ງ; ຢາງໄມ້ທຳມະຊາດ, ຢາງຂອງຕົ້ນສົນ, ຢາງໄມ້ປະສົມ ແລະ ຢາງສົດ ໂອລີໂອເຣຊີ (ຕົວຢ່າງ, ຢາງຫອມທຳມະຊາດ). |
| | 1301.90 | - ອື່ນໆ: |

| | | |
|---|---|---|
| 13 | 1301.90.30 | - - ຢາງໄດ້ຈາກກັນຊາ |
| | 1302 | ນ້ຳຫຼໍ່ລ້ຽງໃນຕົ້ນໄມ້ ແລະ ສິ່ງສະກັດຈາກພືດ; ສານຈຳພວກເພັກຕິກ, ເກືອເພັກຕິກ ແລະ ເກືອເພັກເທດສ໌, ວຸ້ນທີ່ໄດ້ຈາກສາຫຼ່າຍທະເລ ແລະ ວຸ້ນ ແລະ ຢາງຊຸ້ນອື່ນໆ ທີ່ໄດ້ຈາກຜະລິດຕະພັນ ຈາກພືດ, ຈະດັດແປງແລ້ວ ຫຼື ບໍ່ກໍ່ຕາມ. |
| | | -ນ້ຳຫຼໍ່ລ້ຽງໃນຕົ້ນໄມ້ ແລະ ສິ່ງສະກັດຈາກພືດ: |
| | 1302.11 | - - ຝິ່ນ: |
| 14 | 1302.11.10 | - - - ປູວິສ ໂອພີໄອ |
| 15 | 1302.11.90 | - - - ອື່ນໆ |
| | 2921 | ສານປະກອບອະມີ-ຟັງຊັນ. |
| | | - ອະໂຣເມຕິກໂມໂອະມີນ ແລະ ອະນຸພັນຂອງມັນ; ເກືອຂອງສິ່ງດັ່ງກ່າວ: |
| 16 | 2921.46.00 | - - ອາມເຟດຕາມີນ (INN), ເບຊ໌ເຟດຕາມີນ (INN), ດີແຊມເຟດຕາມີນ (INN), ເອທິແລມເຟດຕາມີນ (INN), ເຟັນແຄມຟາມີນ (INN), ລີເຟດຕາມີນ (INN), ລີແວມເຟດຕາມີນ (INN), ມີເຟີເຣັກ (INN) ແລະ ເຟັນເຕີມີນ (INN); ເກືອຂອງສິ່ງດັ່ງກ່າວ |
| | 2939 | ແອລຄາລອຍດ໌ຈາກພືດ, ທີ່ໄດ້ຈາກທຳມະຊາດ ຫຼື ຈາກການ ສັງເຄາະ, ແລະ ເກືອ, ອີເທີຣ໌ຂອງສິ່ງດັ່ງກ່າວ, ເອສເທີຣ໌ ແລະ ອະນຸພັນອື່ນໆ. |
| | | - ແອລຄາລອຍດ໌ຂອງຝິ່ນ ແລະ ອະນຸພັນຂອງມັນ; ເກືອຂອງສິ່ງດັ່ງກ່າວ: |
| | 2939.11 | - - ຝິ່ນທີ່ຂຽວມາຈາກຝິ່ນແຫ້ງ; ບິວເພຣໍຟີນ (INN),ໂກເດອີນ (INN), ດີໄຮໂດຣໂຄເດອີນ (INN), ເອທີ ມໍຟີນ (INN), ເອໂທຟີນ (INN), ເຮໂຣອີນ (INN), ໄຮໂດຣໂຄດັນ (INN), ໄຮໂດຣໂມໂຟນ (INN), ມໍຟີນ (INN), ນີໂຄມໍຟີນ (INN), ອັອກໄຊໂຄດອນ (INN), ອັອກໄຊມໍໂຟນ (INN), ໂຟໂຄດີນ (INN), ເທບາຄອນ (INN) ແລະ ເທບາອີນ; ເກືອຂອງສິ່ງເຫຼົ່ານັ້ນ: |
| 17 | 2939.11.10 | - - - ຝິ່ນທີ່ຂຽວມາຈາກຝິ່ນແຫ້ງ ແລະ ເກືອຂອງສິ່ງດັ່ງກ່າວ |
| 18 | 2939.11.90 | - - - ອື່ນໆ |
| 19 | 2939.19.00 | - - ອື່ນໆ |
| | | - ອື່ນໆ: |
| | 2939.91 | - - ໂຄເຄນ, ເອກໂກນີນ, ລີໂວເມດເອມເຟດຕາມີນ, ເມດເອມເຟດຕາມີນ (INN), ເມດເອມເຟດຕາ ມີຣາຊີເມດ; ເກືອ, ເອສເທີຣ໌ ແລະ ອະນຸພັນອື່ນໆ ຂອງສິ່ງດັ່ງກ່າວ: |
| 20 | 2939.91.10 | - - - ໂຄເຄນ ແລະ ອະນຸພັນຂອງສິ່ງດັ່ງກ່າວ |
| 21 | 2939.91.90 | - - - ອື່ນໆ |
| 22 | 3601.00.00 | ໝື້ຊະນິດດັບສິ່ງ. |
| 23 | 3602.00.00 | ວັດຖຸລະເບີດ ນອກຈາກໝື້ຊະນິດດັບສິ່ງ |
| | 3603 | ສາຍຊະນວນຈຸດລະເບີດ, ສະນວນລະເບີດ, ແກບກົ້ນລູກປືນ ຫຼື ແກບທີວສະນວນກົ້ນລະເບີດ, ເຊື້ອຈຸດລະເບີດ ແລະ ເຄື່ອງຈຸດລະເບີດຊະນິດໄຟຟ້າ. |
| 24 | 3603.00.10 | - ເຄື່ອງສະນວນ; ທີ່ມີສາຍສະນວນເປັນຫຼັກ; ເຄື່ອງຈຸດລະເບີດທີ່ໃຊ້ສັນຍານວິທະຍຸ |
| 25 | 3603.00.20 | - ສາຍສະນວນຈຸດລະເບີດ ຫຼື ສາຍສະນວນລະເບີດ |
| 26 | 3603.00.90 | - ອື່ນໆ |

| | | |
|---|---|---|
| | 3604 | ຜະລິດຕະພັນສຳລັບບັ້ງໄຟດອກ, ບັ້ງໄຟສຳລັບໃຫ້ສັນຍາ ຫຼື ບັ້ງໄຟສັນຍານຕັດຝົນມີໝາກເຫັບ, ບັ້ງໄຟສັນຍານຄ້ອນ ແລະ ຜະລິດຕະພັນຄ້າຍຄຽງ, ກະໂພກ ແລະ ຜະລິດຕະພັນຈຳພວກດອກໄມ້ໄຟອື່ນໆ. |
| 27 | 3604.10.00 | - ຜະລິດຕະພັນດອກໄມ້ໄຟ |
| | 3604.90 | - ອື່ນໆ: |
| 28 | 3604.90.20 | - - ຜະລິດຕະພັນດອກໄມ້ໄຟຂະໜາດນ້ອຍ ແລະ ແກບກົ້ນລູກລະເບີດສຳລັບຂອງຫຼິ້ນ |
| 29 | 3604.90.30 | - - ບັ້ງພຸສັນຍານ ຫຼື ບັ້ງພຸ |
| 30 | 3604.90.90 | - - ອື່ນໆ |
| | 8401 | ເຄື່ອງປະຕິກອນນິວເຄລຍ; ຖັງເຊື້ອເພີງ (ຄາຣ໌ທຣິດຈ໌), ທີ່ຍັງບໍ່ທັນ ໄດ້ໃຊ້ສຳລັບເຄື່ອງປະຕິກອນນິວເຄລຍ; ເຄື່ອງຈັກ ແລະ ເຄື່ອງອຸປະກອນໃຊ້ສຳລັບການແຍກໄອໂຊໂທບ. |
| 31 | 8401.10.00 | - ເຄື່ອງປະຕິກອນນິວເຄລຍ |
| 32 | 8401.20.00 | - ເຄື່ອງຈັກ ແລະ ເຄື່ອງອຸປະກອນສຳລັບໃຊ້ໃນການແຍກໄອໂຊໂທບ, ແລະ ສ່ວນປະກອບຂອງສິ່ງດັ່ງກ່າວ |
| 33 | 8401.30.00 | - ຖັງເຊື້ອເພີງ (ຄາຣ໌ທຣິດຈ໌), ທີ່ຍັງບໍ່ທັນໄດ້ໃຊ້ |
| 34 | 8401.40.00 | - ສ່ວນປະກອບຂອງເຄື່ອງປະຕິກອນນິວເຄລຍ |
| 35 | 8710.00.00 | ລົດຊາ ແລະ ລົດຫຸ້ມເກາະອື່ນໆ ທີ່ຂັບເຄື່ອນດ້ວຍເຄື່ອງຈັກ, ຈະຕິດຕັ້ງອາວຸດ ຫຼື ບໍ່ກໍ່ຕາມ ແລະ ສ່ວນປະກອບຂອງສິ່ງດັ່ງກ່າວ. |
| 36 | 8801.00.00 | ບອລລູນ ແລະ ເຄື່ອງເຫາະ, ເຄື່ອງເວີນ, ເຄື່ອງເວີນຊະນິດແຂວນ ແລະ ເຄື່ອງ ເຫາະອື່ນໆ ທີ່ບໍ່ໃຊ້ກຳລັງຂັບ. |
| | 8802 | ເຄື່ອງບິນອື່ນໆ (ຕົວຢ່າງ, ເຮລິຄອບເຕີ, ເຮືອບິນ); ຍານອາວະກາດ (ລວມທັງດາວທຽມ) ແລະ ຈະຫຼວດຍິງສົ່ງຂອງຍານດັ່ງກ່າວ. |
| | | - ເຮລິຄອບເຕີ: |
| 37 | 8802.11.00 | - - ມີນ້ຳໜັກ (ບໍ່ທັນບັນທຸກ) ບໍ່ເກີນ 2,000 ກິໂລກຣາມ |
| 38 | 8802.12.00 | - - ມີນ້ຳໜັກ (ບໍ່ທັນບັນທຸກ) ເກີນ 2,000 ກິໂລກຣາມ: |
| | 8802.20 | - ເຮືອບິນ ແລະ ເຄື່ອງບິນອື່ນໆ, ທີ່ມີນ້ຳໜັກ (ບໍ່ທັນບັນທຸກ) ບໍ່ເກີນ 2,000 ກລ: |
| 39 | 8802.20.10 | - - ເຄື່ອງບິນ |
| 40 | 8802.20.90 | - - ອື່ນໆ |
| | 8802.30 | - ເຮືອບິນ ແລະ ເຄື່ອງບິນອື່ນໆ, ທີ່ມີນ້ຳໜັກ (ບໍ່ທັນບັນທຸກ) ເກີນ 2,000 ກລ ແຕ່ບໍ່ເກີນ 15,000 ກລ: |
| 41 | 8802.30.10 | - - ເຄື່ອງບິນ |
| 42 | 8802.30.90 | - - ອື່ນໆ |
| | 8802.40 | - ເຮືອບິນ ແລະ ເຄື່ອງບິນອື່ນໆ ທີ່ມີນ້ຳໜັກ (ບໍ່ທັນບັນທຸກ) ເກີນ 15,000 ກລ: |
| 43 | 8802.40.10 | - - ເຄື່ອງບິນ |
| 44 | 8802.40.90 | - - ອື່ນໆ |
| 45 | 8802.60.00 | - ຍານອາວະກາດ (ລວມທັງດາວທຽມ) ແລະ ຈະຫຼວດຍິງສົ່ງຂອງສິ່ງດັ່ງກ່າວ |
| | 8803 | ສິ້ນສ່ວນຂອງຜະລິດຕະພັນຂອງລະຫັດເຄົ້າ 88.01 ຫຼື 88.02. |

| | | |
|---|---|---|
| 46 | 8803.10.00 | - ໃບພັດ ແລະ ຫົວປີ່ນຊະນິດໂຣເຕີ ແລະ ສິ້ນສ່ວນຂອງສິ່ງດັ່ງກ່າວ |
| 47 | 8803.20.00 | - ຖານຈອດອັນເດີ-ແຄຣີເອຈ໌ ແລະ ສິ້ນສ່ວນຂອງສິ່ງດັ່ງກ່າວ |
| 48 | 8803.30.00 | - ສິ້ນສ່ວນອື່ນໆ ຂອງເຮືອບິນ ແລະ ເຮລິຄອບເຕີ |
| | 8803.90 | - ອື່ນໆ: |
| 49 | 8803.90.10 | - - ຂອງດາວທຽມສື່ສານໂທລະຄົມມະນາຄົມ |
| 50 | 8803.90.20 | - - ຂອງບອລລູນ, ເຄື່ອງເວີ້ນ ຫຼື ວ່າວ |
| 51 | 8803.90.90 | - - ອື່ນໆ |
| | 8805 | ເຄື່ອງປ່ອຍອາກາດສະຍານ; ເຄື່ອງອຸປະກອນຢູ່ເທິງເຮືອບັນທຸກເຄື່ອງບິນສຳລັບ ຫຼຸດຜ່ອນຄວາມໄວຂອງເຄື່ອງບິນ ຫຼື ອຸປະກອນທີ່ຄ້າຍຄຶງກັນ; ເຄື່ອງອຸປະກອນ ສຳລັບຝຶກຊ້ອມການບິນເທິງໜ້າດິນ; ລວມທັງສ່ວນປະກອບຂອງສິ່ງດັ່ງກ່າວ. |
| 52 | 8805.10.00 | - ເຄື່ອງປ່ອຍອາກາດສະຍານ ແລະ ສ່ວນປະກອບຂອງສິ່ງດັ່ງກ່າວ; ລວມທັງ ເຄື່ອງອຸປະກອນຢູ່ເທິງເຮືອບັນທຸກເຄື່ອງບິນສຳລັບຫຼຸດຜ່ອນຄວາມໄວຂອງເຄື່ອງບິນ ຫຼື ອຸປະກອນທີ່ຄ້າຍຄຶງກັນ ແລະ ສ່ວນປະກອບຂອງສິ່ງດັ່ງກ່າວ |
| | | - ເຄື່ອງອຸປະກອນຝຶກຊ້ອມການບິນເທິງໜ້າດິນ ແລະ ສ່ວນ ປະກອບຂອງສິ່ງດັ່ງກ່າວ: |
| 53 | 8805.21.00 | - - ເຄື່ອງຈຳລອງເຫດການຕໍ່ສູ້ທາງອາກາດ ແລະ ສ່ວນປະກອບຂອງສິ່ງດັ່ງກ່າວ |
| | 8805.29 | - - ອື່ນໆ: |
| 54 | 8805.29.10 | - - - ເຄື່ອງອຸປະກອນສຳລັບຝຶກຊ້ອມການບິນເທິງໜ້າດິນ |
| 55 | 8805.29.90 | - - - ອື່ນໆ |
| | 9301 | ອາວຸດທີ່ໃຊ້ທາງການທະຫານ, ນອກຈາກປືນສັ້ນຣີໂວລເວີຣ໌, ປືນພິສໂຕນ ແລະ ອາວຸດທີ່ໄດ້ລະບຸໄວ້ໃນລະຫັດເຄົ້າ 93.07. |
| 56 | 9301.10.00 | - ປືນໃຫຍ່ (ຕົວຢ່າງ, ປືນໃຫຍ່ ເລົາປືນຍາວ, ປືນໃຫຍ່ເລົາປືນສັ້ນ ແລະ ປືນຄົກ): |
| 57 | 9301.20.00 | - ເຄື່ອງຝັງຈະຫຼວດ; ເຄື່ອງພົ່ນໄຟ; ເຄື່ອງຍິງລະເບີດ; ເຄື່ອງຍິງຕໍປີໂດ ແລະເຄື່ອງຍິງຄ້າຍຄຶງກັນ |
| 58 | 9301.90.00 | - ອື່ນໆ |
| 59 | 9302.00.00 | ປືນເຣໂວລເວີຣ໌ ແລະ ປືນພິສໂຕລ, ນອກຈາກປືທີ່ໄດ້ລະບຸໄວ້ໃນລະຫັດເຄົ້າ 93.03 ແລະ 93.04. |
| | 9303 | ອາວຸດປືນອື່ນໆ ແລະ ເຄື່ອງມືຄ້າຍຄຶງທີ່ໃຊ້ການລະເບີດຂອງໝື້ (ຕົວຢ່າງ, ປືນ ລູກຊອງ ແລະ ປືນຍາວທີ່ໃຊ້ໃນການກິລາ, ປືນແກັບ, ປືນຍິງສິ່ງລູກສອນ ໄຟໃຫ້ສັນຍານ ແລະ ເຄື່ອງມືອື່ນໆ ທີ່ສ້າງຂຶ້ນເພື່ອໃຊ້ໃນການຍິງສິ່ງສັນຍານ, ປືນສຳລັບຍິງໝື້ເປົ່າ, ປືນສັ້ນຍິງສິດຢາ ແລະ ປືນຍິງສິ່ງສາຍເຊືອກ. |
| 60 | 9303.10.00 | - ປືນແກັບ |
| 61 | 9303.20.00 | - ປືນລູກຊອງອື່ນໆ ທີ່ໃຊ້ໃນການກິລາ, ການລ່າສັດ ຫຼື ການຍິງເປົ້າລວມທັງປືນທີ່ເປັນທັງປືນລູກຊອງ ແລະ ປືນຍາວ: |
| 62 | 9303.30.00 | - ປືນຍາວອື່ນໆ ທີ່ໃຊ້ໃນການກິລາ, ການລ່າສັດ ຫຼື ການຍິງເປົ້າ: |
| 63 | 9303.90.00 | - ອື່ນໆ |
| | 9304 | ອາວຸດອື່ນໆ (ຕົວຢ່າງ, ປືນ ແລະ ປືນສັ້ນຊະນິດທີ່ໃຊ້ສະປຣິງ, ໃຊ້ລົມ ຫຼື ໃຊ້ ແກັສ, |

| | | |
|---|---|---|
| | | ຄ້ອນຕຳຫຼວດ), ບໍ່ລວມປະເພດທີ່ໄດ້ລະບຸໄວ້ໃນ ລະຫັດເຄົ້າ 93.07. |
| 64 | 9304.00.10 | - ປືນລົມ, ທີ່ໃຊ້ຍິງໃນລະດັບຄວາມດັນບໍ່ເກີນ 7 ກິໂລກຣາມ/ຊມ2 |
| 65 | 9304.00.90 | - ອື່ນໆ |
| | 9305 | ສິ້ນສ່ວນ ແລະ ສ່ວນປະກອບຂອງເຄື່ອງຂອງໃນລະຫັດເຄົ້າ 93.01 ເຖິງ 93.04. |
| 66 | 9305.10.00 | - ຂອງປືນເຣໂວເວີຣ໌ ຫຼື ປືນພິສໂຕນ |
| 67 | 9305.20.00 | - ຂອງປືນລູກຊອງ ຫຼື ປືນຍາວຂອງລະຫັດເຄົ້າ 93.03 |
| | | - ອື່ນໆ: |
| | | - - ອາວຸດທີ່ໃຊ້ທາງການທະຫານຂອງລະຫັດເຄົ້າ 93.03: |
| 68 | 9305.91.10 | - - - ທີ່ເຮັດດ້ວຍໜັງ ຫຼື ວັດຖຸຕໍ່າແຜ່ນ |
| 69 | 9305.91.90 | - - - ອື່ນໆ |
| | | - - ອື່ນໆ: |
| | | - - - ຂອງຜະລິດຕະພັນຂອງລະຫັດຍ່ອຍ 9304.00.90: |
| 70 | 9305.99.11 | - - - - ທີ່ເຮັດດ້ວຍໜັງ ຫຼື ວັດຖຸຕໍ່າແຜ່ນ |
| 71 | 9305.99.19 | - - - - ອື່ນໆ |
| | | - - - ອື່ນໆ: |
| 72 | 9305.99.91 | - - - - ທີ່ເຮັດດ້ວຍໜັງ ຫຼື ວັດຖຸຕໍ່າແຜ່ນ |
| 73 | 9305.99.99 | - - - - ອື່ນໆ |
| | 9306 | ລະເບີດ, ລະເບີດມື, ຕໍຣ໌ປີໂດ, ມິນ, ລູກສອນໄຟ ແລະ ເຄື່ອງຍຸດໂທປະກອນທີ່ຄ້າຍກັນ ແລະ ສິ້ນສ່ວນຂອງສິ່ງດັ່ງກ່າວ; ລູກປືນ, ປອກລູກປືນອື່ນໆ ແລະ ສິ້ນ ສ່ວນຂອງສິ່ງດັ່ງກ່າວ, ລວມທັງລູກຫວ່ານ ແລະ ໝອນລູກປືນ. |
| | | - ລູກປືນສຳລັບປືນລູກຊອງ ແລະ ສິ້ນສ່ວນຂອງລູກປືນດັ່ງກ່າວ, ລວມທັງລູກປືນອັດລົມ: |
| 74 | 9306.21.00 | - - ລູກປືນ |
| 75 | 9306.29.00 | - - ອື່ນໆ |
| | | - ລູກປືນອື່ນໆ ແລະ ສິ້ນສ່ວນຂອງລູກປືນດັ່ງກ່າວ: |
| | | - - ສຳລັບປືນເຣໂວເວີຣ໌ ຫຼື ປືນພິສໂຕນຂອງລະຫັດເຄົ້າ 93.02: |
| 76 | 9306.30.11 | - - - ລູກປືນສຳລັບປືນຂະໜາດລຳກ້ອງ .22 |
| 77 | 9306.30.19 | - - - ອື່ນໆ |
| 78 | 9306.30.20 | - - ລູກປືນສຳລັບເຄື່ອງຍິງຕະປູຫົວໃຫຍ່ ຫຼື ເຄື່ອງຄ້າຍຄຽງ ຫຼື ເຄື່ອງຍິງນອດກຽວ ແລະ ສ່ວນປະກອບຂອງສິ່ງດັ່ງກ່າວ |
| | | - - ອື່ນໆ: |
| 79 | 9306.30.91 | - - - ລູກປືນສຳລັບປືນຂະໜາດລຳກ້ອງ .22 |
| 80 | 9306.30.99 | - - - ອື່ນໆ |
| 81 | 9306.90.00 | - ອື່ນໆ |
| 82 | 9307.00.00 | ງ້າວ, ດາບ, ກະບີ່, ຫອກ, ແລະ ອາວຸດທີ່ຄ້າຍຄຽງກັນ ແລະ ສິ້ນສ່ວນຂອງສິ່ງດັ່ງກ່າວ, ລວມທັງຊີບ ແລະ ຝັກ. |

| | | |
|---|---|---|
| | | ງາຊ້າງ, ກະດູກ, ອອງເຕົ່າ, ເຂົາສັດ, ປະກາຣັງ, ເປືອກຫອຍມຸກ ແລະ ວັດຖຸສໍາລັບແກະສະຫຼັກອື່ນໆ ທີ່ໄດ້ຈາກສັດ, ທີ່ຕົບແຕ່ງແລ້ວ ລວມທັງເຄື່ອງທີ່ເຮັດດ້ວຍວັດ ຖຸດັ່ງກ່າວ (ລວມທັງເຄື່ອງທີ່ໄດ້ຈາກການຫຼໍ່ແບບ). |
| 83 | 9601.10.00 | - ງາຊ້າງທີ່ຕົບແຕ່ງແລ້ວ ແລະ ເຄື່ອງທີ່ເຮັດດ້ວຍງາຊ້າງ |
| | 9601.90 | - ອື່ນໆ: |
| | | - - ອື່ນໆ: |
| 84 | 9601.90.91 | - - - ກັບໃສ່ຢາຊິກາ ຫຼື ຢາສູບ, ກະປຸກຢາເສັ້ນ ແລະ ເຄື່ອງປະດັບຕົບແຕ່ງຕາມບ້ານເຮືອນ |
| 85 | 9601.90.99 | - - - ອື່ນໆ |
| 86 | 9705.00.00 | ເຄື່ອງສະສົມ ແລະ ເຄື່ອງທີ່ນັກສະສົມລວບລວມ ຊຶ່ງກ່ຽວກັບທາງສັດຕະວິທະຍາ, ພຶດສາດ, ທໍລະນີວິທະຍາ, ກາຍະວິພາກສາດ ຫຼື ມີຄຸນຄ່າທາງປະຫວັດສາດ, ບູ ຮານຄະດີ, ບູຮານຊີວະວິທະຍາ, ຊາດພັນວິທະຍາ ຫຼື ວິທະຍາການກ່ຽວກັບຫຼຽນກາ ແລະ ເງິນຫຼຽນ. |
| 87 | 9706.00.00 | ເຄື່ອງວັດຖຸບູຮານທີ່ມີອາຍຸເກີນ 100 ປີ. |

**ໝາຍເຫດ**:

1. ບັນດາລາຍການສິນຄ້າທີ່ລະບຸດັ່ງກ່າວຂ້າງເທິງ ແມ່ນອີງຕາມ ສາລະບານອັດຕາພາສີເອກະພາບອາຊຽນ ປີ 2012 (AHTN 2012) ຂອງ ສປປ ລາວ.

**ເອກະສານຊ້ອນທ້າຍ 3**

ລາຍການສິນຄ້າທີ່ມີແຫລ່ງກຳເນີດຈາກ ສປປ ລາວ, ທີ່ໄດ້ຮັບໂກຕານຳເຂົ້າ ສສ ຫວຽດນາມ ດ້ວຍອັດຕາພາສີ 0% ໃນແຕ່ລະປີ, ມີດັ່ງນີ້:

1. ໂກຕາສຳລັບສິນຄ້າປະເພດໃບຢາສູບ ແລະ ກ້ານຢາສູບ ຈຳນວນ **3,000** ໂຕນ, ປະກອບມີ:

| ລ/ດ | AHTN 2012 | ເນື້ອໃນລະອຽດ |
|---|---|---|
| | 24.01 | **ຢາສູບທີ່ບໍ່ທັນທຳການຜະລິດ ຫຼື ບໍ່ທັນສຳເລັດຮູບ, ເສດຢາສູບ.** |
| | 2401.10 | - ຢາສູບ, ທີ່ບໍ່ທັນໄດ້ເອົາກ້ານ ຫຼື ໃບອອກ: : |
| 1 | 2401.10.10 | - - ໃບຢາເວີຈິເນຍ, ອົບແລ້ວ |
| 2 | 2401.10.20 | - - ໃບຢາເວີຈິເນຍ, ບໍ່ທັນອົບ |
| 3 | 2401.10.40 | - - ໃບຢາສູບເບີເລ |
| 4 | 2401.10.50 | - - ອື່ນໆ, ອົບແລ້ວ |
| 5 | 2401.10.90 | - - ອື່ນໆ |
| | 2401.20 | - ໃບຢາສູບ, ທີ່ເອົາກ້ານ ຫຼື ໃບອອກພຽງແຕ່ບາງສ່ວນ ຫຼື ທັງໝົດ: |
| 6 | 2401.20.10 | - - ໃບຢາສູບເວີຈິເນຍ, ອົບແລ້ວ |
| 7 | 2401.20.20 | - - ໃບຢາສູບເວີຈິເນຍ, ບໍ່ທັນອົບ |
| 8 | 2401.20.30 | - - ໃບຢາສູບມາຈາກຕາເວັນອອກ |
| 9 | 2401.20.40 | - - ໃບຢາສູບເບີເລ |
| 10 | 2401.20.50 | - - ອື່ນໆ, ອົບແລ້ວ |
| 11 | 2401.20.90 | - - ອື່ນໆ |
| | 2401.30 | - ເສດຂອງຢາສູບ: |
| 12 | 2401.30.10 | - - ກ້ານ ຫຼື ລຳຕົ້ນຢາສູບ |
| 13 | 2401.30.90 | - - ອື່ນໆ |

2. ໂກຕາສຳລັບສິນຄ້າປະເພດເຂົ້າກິນ ຈຳນວນ **70,000** ໂຕນ ປະກອບມີ:

| ລ/ດ | AHTN 2012 | ເນື້ອໃນລະອຽດ |
|---|---|---|
| | 10.06 | **ເຂົ້າ.** |
| | 1006.10 | - ເຂົ້າເປືອກ |
| 1 | 1006.10.90 | - - ອື່ນໆ |
| | 1006.20 | - ເຂົ້າກ້ອງ: |
| 2 | 1006.20.10 | - - ເຂົ້າຫອມໄຫມະລິ |
| 3 | 1006.20.90 | - - ອື່ນໆ |

**ໝາຍເຫດ:**

1. ບັນດາລາຍການສິນຄ້າທີ່ລະບຸດັ່ງກ່າວຂ້າງເທິງ ແມ່ນອີງຕາມ ສາລະບານອັດຕາພາສີເອກພາບອາຊຽນ ປີ 2012 (AHTN 2012) ຂອງ ສປປ ລາວ.
2. ໃບຢັ້ງຢືນແຫລ່ງກຳເນີດສິນຄ້າທີ່ໃຊ້ສຳລັບຢັ້ງຢືນຕໍ່ບັນຊີລາຍການສິນຄ້າທີ່ລະບຸດັ່ງກ່າວຂ້າງເທິງແມ່ນນຳໃຊ້ໃບຢັ້ງຢືນແຫລ່ງກຳເນີດສິນຄ້າຟອມ S